ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 56 /ທຫ

ນະຄອນຫຼວງວຽງຈັນ, ວັນທີ 24 ກຸມພາ 2023

# ແຈ້ງການ

## ຈຳໜ່າຍພັນທະບັດ ທະນາຄານແຫ່ງ ສປປ ລາວ ສະກຸນເງິນກີບ ງວດທີ 2 (ຄັ້ງທີ 2) ໃຫ້ແກ່ມວນຊົນ

ຫ້ອງການ ທະນາຄານແຫ່ງ ສປປ ລາວ (ທຫລ) ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ເພື່ອເປັນການຈັດຕັ້ງປະຕິບັດນະໂຍບາຍເງິນຕາ ປະກອບສ່ວນເຂົ້າໃນການຮັກສາສະຖຽນລະພາບເງິນຕາແຫ່ງຊາດ ບົນພື້ນຖານໃຫ້ບັນລຸໄດ້ຄາດໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ກໍ່ຄືວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ. ນັບແຕ່ວັນທີ 28 ກຸມພາ 2023 ເປັນຕົ້ນໄປ ທະນາຄານແຫ່ງ ສປປ ລາວ ຈະໄດ້ມີການສືບຕໍ່ອອກຈຳໜ່າຍພັນທະບັດ ທຫລ ສະກຸນເງິນກີບ ງວດທີ 2 (ຄັ້ງທີ 2) ໃຫ້ແກ່ມວນຊົນ ດັ່ງມີລາຍລະອຽດລຸ່ມນີ້:

ພັນທະບັດ ທຫລ ສະກຸນເງິນກີບ ງວດທີ 2 (ຄັ້ງທີ 2) ທີ່ອອກຈຳໜ່າຍໃຫ້ແກ່ມວນຊົນ ມີມູນຄ່າ 1.000.000.000.000 ກີບ (ໜຶ່ງພັນຕື້ກີບ); ອາຍຸພັນທະບັດ 6 ເດືອນ ບໍ່ສາມາດປ່ຽນມືໄດ້; ອັດຕາດອກເບ້ຍ 15% ຕໍ່ປີ ຊຳລະດອກເບ້ຍຄັ້ງດຽວເມື່ອຄົບກຳນົດໄຖ່ຖອນພັນທະບັດ; ເປັນພັນທະບັດຮູບແບບເອເລັກໂຕຣນິກ ບໍ່ມີໃບພັນທະບັດເປັນເຈ້ຍ ແຕ່ຈະມີການອອກໜັງສືຢັ້ງຢືນການຖືຄອງພັນທະບັດໃຫ້ແກ່ເຈົ້າຂອງພັນທະບັດ. ກຳນົດຜູ້ທີ່ມີເງື່ອນໄຂໃນການຊື້ພັນທະບັດແມ່ນ ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຖິ່ນຖານຢູ່ ສປປ ລາວ (ຍົກເວັ້ນ ທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ) ຊຶ່ງວົງເງິນພັນທະບັດທີ່ຈຳໜ່າຍໃຫ້ແກ່ບຸກຄົນ ແລະ ນິຕິບຸກຄົນ ແມ່ນກຳນົດບໍ່ເກີນ 1.000.000.000 ກີບ (ໜຶ່ງຕື້ກີບ) ຕໍ່ລາຍ.

ການຈຳໜ່າຍພັນທະບັດ ທຫລ ຄັ້ງນີ້ແມ່ນຈະຈຳໜ່າຍຜ່ານທະນາຄານທຸລະກິດ 7 ແຫ່ງ ທີ່ມີເງື່ອນໄຂເປັນຕົວແທນໃນການຈຳໜ່າຍຕາມຂໍ້ກຳນົດຂອງ ທຫລ ດັ່ງລາຍຊື່ລຸ່ມນີ້:

- ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL);
- ທະນາຄານ ພັດທະນາລາວ ຈຳກັດ (LDB);
- ທະນາຄານ ສົ່ງເສີມກະສິກຳ ຈຳກັດ (APB);
- ທະນາຄານ ຮ່ວມທຸລະກິດລາວ-ຫວຽດ ຈຳກັດ (LVB);
- ທະນາຄານ ຮ່ວມພັດທະນາ (JDB);
- ທະນາຄານ ບີໄອຊີ ລາວ ຈຳກັດ (BIC).
- ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂານະຄອນຫຼວງວຽງຈັນ (ICBC).



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 **BNL.VTE.LS**
ໂທລະສານ: (856)-21-213108 ໂທລະສັບ: 213109-213110 **Email: BOL@bol.gov.la; www.bol.gov.la**

ສຳລັບ ທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ຕ້ອງການຊື້ພັນທະບັດທະນາຄານແຫ່ງ ສປປ ລາວ ສະກຸນເງິນກີບ ງວດທີ 2 (ຄັ້ງທີ 2) ແມ່ນໃຫ້ເຂົ້າມາຊື້ໃນຕະຫຼາດເປີດ ຊຶ່ງສາມາດຕິດຕໍ່ ແລະ ປະສານງານ ກັບ ກົມບໍລິການທະນາຄານ, ທະນາຄານແຫ່ງ ສປປ ລາວ.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງບັນດາທ່ານ ເພື່ອຊາບ ແລະ ຂໍເຊີນຊວນຜູ້ທີ່ມີຄວາມສົນໃຈຊື້ພັນທະບັດ ທຫລ ສະກຸນເງິນກີບ ງວດທີ 2 (ຄັ້ງທີ 2) ສາມາດເຂົ້າໄປພົບພັນກັບທະນາຄານທຸລະກິດທີ່ເປັນຕົວແທນຈຳໜ່າຍ ນັບແຕ່ວັນທີອອກຈຳໜ່າຍ ເປັນຕົ້ນໄປ.

**ຫົວໜ້າຫ້ອງການ**

ເພັດສະກາພອນ ແກ້ວວົງວິຈິດ